# ຮ່າງໂຄງປະກອບເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ
# ຈຸດໝາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ

## ຄວາມເປັນມາ ແລະ ຈຸດປະສົງ

ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ໂດຍໄດ້ຮັບທຶນສະໜັບສະໜູນຈາກທະນາຄານພັດທະນາອາຊີ (Asian Development Bank – ADB) ມີຈຸດປະສົງປັບປຸງໂຄງປະກອບເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ (National Destination Management Network – DMN) ແລະ ເຂດເປົ້າໝາຍຂອງໂຄງການເຊັ່ນ ແຂວງຫລວງພະບາງ, ແຂວງວຽງຈັນ, ເມືອງວັງວຽງ ແລະ ພາກໃຕ້ຂອງລາວ. ເຄືອຂ່າຍ DMN ແມ່ນກົນໄກທີ່ຈຳເປັນ ແລະ ສຳຄັນສຳລັບໂຄງການ ໃນການສະໜອງການສະໜັບສະໜູນດ້ານງົບປະມານ ແລະ ວິຊາການໃຫ້ແກ່ພາກລັດ ແລະ ພາກທຸລະກິດ. ເປັນເວທີປຶກສາຫາລື ແລະ ເຮັດວຽກຮ່ວມກັນລະຫວ່າງພາກລັດ, ພາກທຸລະກິດ, ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວ.

## ໂຄງປະກອບເຄືອຂ່າຍ DMN ຂັ້ນສູນກາງ

ໃນເບື້ອງຕົ້ນ, ຄະນະບໍລິຫານງານ ແລະ ສະມາຊິກພາກລັດ ແມ່ນສະເພາະຈາກກະຊວງ ຖວທ, ພາກລັດຈາກກະຊວງອື່ນແມ່ນຜູ້ຮ່ວມກອງປະຊຸມເຄືອຂ່າຍ ຫລື ຖືກເຊີນມາເຮັດວຽກຮ່ວມໂດຍອີງຕາມຫົວຂໍ້ປຶກສາຫາລື.

## ພາລະບົດບາດຂອງຄະນະບໍລິຫານງານເຄືອຂ່າຍ

ໃຫ້ທິດຊີ້ນຳໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວປະຈຳປີ ຜ່ານກອງປະຊຸມເຄືອຂ່າຍທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ ຮ່ວມກັບບັນດາໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວ.

## ພາລະບົດບາດຂອງສະມາຊິກເຄືອຂ່າຍ

ປະກອບຄຳຄິດຄຳເຫັນເຂົ້າໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດ ໝາຍປາຍທາງການທ່ອງທ່ຽວປະຈຳປີ ຜ່ານກອງປະຊຸມເຄືອຂ່າຍທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ ຮ່ວມກັບບັນດາໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວ.

### ເຄືອຂ່າຍ DMN ຂັ້ນສູນກາງ ແລະ ສະພາສົ່ງເສີມການທ່ອງທ່ຽວລາວ

ເຄືອຂ່າຍ DMN ຂັ້ນສູນກາງ ຈະບໍ່ທັບຊ້ອນກັບສະພາສົ່ງເສີມການທ່ອງທ່ຽວລາວ ເຊິ່ງກຳລັງຢູ່ໃນຂັ້ນຕອນການຮ່າງດຳລັດ.

**(ຮ່າງ) ໂຄງປະກອບເຄືອຂ່າຍ DMN ຂັ້ນສູນກາງ**

